ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລໍ້ນໍ້າ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຝຶກອົບຮົມວຽກງານກວດສອບ






ໃນລະຫວ່າງວັນທີ 13-16 ຕຸລາ 2020 ຜ່ານມາ; ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດການຝຶກອົບຮົມວຽກງານກວດສອບ ໂດຍການໃຫ້ກຽດເປັນປະທານຂອງທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ປະທານຄະນະກວດກາພັກ ທຫລ; ທ່ານ ບຸນປອນ ວັນນະຈິດ ຮອງປະທານອົງການກວດສອບແຫ່ງລັດ, ມີບັນດາຄະນະນຳ-ພະນັກງານວິຊາການທີ່ກ່ຽວຂ້ອງ ແລະ ນັກຝຶກອົບຮົມ ເຂົ້າຮ່ວມຈຳນວນ 84 ຄົນ.

ກອງປະຊຸມຝຶກອົບຮົມວຽກງານກວດສອບໃນຄັ້ງນີ້ກໍ່ເພື່ອເພີ່ມຂີດຄວາມອາດສາມາດໃຫ້ແກ່ພະນັກງານຜູ້ທີ່ຮັບຜິດຊອບວຽກງານກວດກາຂອງພາກສ່ວນກ່ຽວຂ້ອງຂອງຂະແໜງການທະນາຄານໂດຍສະເພາະ ທຫລ ຮັບຮູ້ ເຂົ້າໃຈກ່ຽວກັບການເຄື່ອນໄຫວວຽກງານການກວດສອບໃນລະບົບການຄວບຄຸມພາຍໃນ, ການກວດສອບການປະມູນການຈັດຊື້-ຈັດຈ້າງ, ການກວດສອບງົບປະມານແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ເພື່ອໃຫ້ການເຄື່ອນໄຫວວຽກງານມີຄວາມເປັນເອກະພາບຖືກຕ້ອງກັບກົດໝາຍ ແລະ ລະບຽບການຕ່າງໆສອດຄ່ອງກັບສະພາບຄວາມເປັນຈິງສະດວກໃນການຈັດຕັ້ງປະຕິບັດ.

ກອງປະຊຸມ, ຍັງໄດ້ຮັບຟັງທ່ານຮອງຜູ້ວ່າການ ທຫລ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍໃຫ້ນັກສຳມະນາກອນທຸກຄົນຈົ່ງເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນບົດຮຽນທີ່ຝຶກອົບຮົມໂດຍການຍາດແຍ່ງເອົາຄວາມຮູ້ນຳຄູອາຈານ ແລະ ແລກປ່ຽນຄຳຄິດຄຳເຫັນນຳນັກຝຶກອົບຮົມດ້ວຍກັນ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍໝູນໃຊ້ເຂົ້າໃນວຽກງານຕົວຈິງທີ່ຕົນເອງຮັບຜິດຊອບໃນແຕ່ລະກົມກອງ, ເປັນເງື່ອນໄຂທີ່ສຳຄັນໃນການປັບປຸງແລະຍົກສູງຄຸນນະພາບຂອງວຽກງານກວດກາໃຫ້ມີຄວາມເຂັ້ມແຂງ,ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນໄປເລື້ອຍໆ.

**#ຂ່າວ: ກົມກວດກາ**
**#ພາບ: ນາງ ປາໄນ ພັນທະລາ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ